# ລາຍຊື່ລໍຖ້າທີ່ຢູ່ອາໄສເປີດແລ້ວ!







## ລາຍຊື່ລໍຖ້າທີ່ຢູ່ອາໄສສຳລັບຜູ້ມີລາຍໄດ້ຕໍ່າຂອງ Tacoma ເປີດໃນວັນທີ 7-18 ຕຸລາ 2019

ອົງການທີ່ຢູ່ອາໄສ Tacoma ຂໍເຊີນຜູ້ທີ່ມີສິດສະໝັກເຂົ້າຮ່ວມໂຄງການທີ່ຢູ່ອາໄສແບບຈ່າຍໄດ້ໃນລາຄາບໍ່ແພງຂອງອົງການ. ພວກເຮົາໃຫ້ຄວາມຊ່ວຍເຫຼືອດ້ານທີ່ຢູ່ອາໄສສອງປະເພດ: ອາພາດເມັ້ນໃຫ້ເຊົ່າໃນລາຄາທີ່ຈ່າຍໄດ້ ຫຼື ໃບຄູປ໋ອງເພື່ອຊ່ວຍຈ່າຍຄ່າເຊົ່າໃນ Tacoma. ພວກເຮົາຈະເປີດຮັບຄຳຮ້ອງສະໝັກຕັ້ງແຕ່:
**8 ໂມງເຊົ້າໃນວັນຈັນ 7 ຕຸລາ ຫາ 5 ໂມງແລງ ວັນສຸກ 18 ຕຸລາ 2019.**

## ລາຍຊື່ລໍຖ້ານີ້ແມ່ນສຳລັບຄົວເຮືອນທີ່ມີ 3 ຄົນຂຶ້ນໄປ

## ສິ່ງທີ່ທ່ານຈຳເປັນມີເພື່ອສະໝັກ:

- ☐ ຊື່ເຕັມ ແລະ ຂໍ້ມູນພື້ນຖານສຳລັບສະມາຊິກຄົວເຮືອນທຸກຄົນ
- ☐ ທີ່ຢູ່ອີເມວທີ່ໃຊ້ຢູ່ ທ່ານສາມາດສ້າງອີເມວໄດ້ທີ່ gmail.com or outlook.com.
- ☐ ລາຍຮັບປະຈຳປີສຳລັບທັງໝົດຄົວເຮືອນ
- ☐ ເລກປະກັນສັງຄົມສຳລັບຜູ້ໃຫຍ່ (18 ປີຂຶ້ນໄປ) ຜູ້ທີ່ມີເລກປະກັນສັງຄົມ

# ສະໝັກທີ່:

# Tacomahousing.net/waitlist

ສະແກນຂ້ອຍດ້ວຍກ້ອງຖ່າຍຮູບຂອງໂທລະສັບຂອງທ່ານ ຫຼື ແອັບລະຫັດ QR

tacomahousing.org | (253) 448-2738 | waitlist@tacomahousing.org

ປັບປຸງຄືນ 30 ສິງຫາ 2019

# ຄຳຖາມທົ່ວໄປ

## ຂ້ອຍມີສິດສະໝັກຫຼືບໍ່?

ຄົວເຮືອນຕ້ອງມີສາມຄົນຂຶ້ນໄປຈິ່ງມີສິດສະໝັກສຳລັບລາຍຊື່ລໍຖ້ານີ້.

## ເປັນຫຍັງລາຍຊື່ລໍຖ້າຈິ່ງມີຄວາມສຳຄັນຄົວເຮືອນທີ່ມີສາມຄົນຂຶ້ນໄປເທົ່ານັ້ນ?

ລາຍຊື່ລໍຖ້າໃນປັດຈຸບັນຂອງພວກເຮົາມີຄົວເຮືອນທີ່ນ້ອຍກວ່າຈຳນວນຫຼວງຫຼາຍທີ່ຍັງລໍຖ້າຜຽນຂອງເຂົາເຈົ້າຢູ່. ແນວໃດກໍຕາມ ລາຍຊື່ລໍຖ້າຂອງພວກເຮົາມີບ່ອນໃຫ້ສຳລັບຄົວເຮືອນທີ່ໃຫຍ່ກວ່າ, ເຊິ່ງເປັນເຫດຜົນວ່າ ຍ້ອນຫຍັງພວກເຮົາຈິ່ງເປີດຮັບສະໝັກສຳລັບຄົວເຮືອນທີ່ມີສາມຄົນຂຶ້ນໄປ.

## ຂ້ອຍຈຳເປັນຕ້ອງອາໄສຢູ່ໃນ **Tacoma** ຈິ່ງສະໝັກໄດ້ບໍ? ບໍ່.

## ຂ້ອຍຈະສະໝັກແນວໃດ ແລະ ເມື່ອໃດ?

1. **ທາງອອນລາຍ** - ສະໝັກທາງອອນລາຍທີ່ Tacomahousing.net/waitlist. ນີ້ແມ່ນວິທີທີ່ດີສຸດ ແລະ ໄວທີ່ສຸດໃນການສະໝັກ.
2. **ທາງໂທລະສັບ** - ໂທຫາ (253) 448-2738, ວັນຈັນຫາວັນສຸກ, ເວລາ 9 ໂມງເຊົ້າ - 5 ໂມງແລງ
3. **ໄປດ້ວຍຕົນເອງ** - ໄປຫາໜຶ່ງໃນຫ້ອງການເຫຼົ່ານີ້ໃນວັນຈັນຫາວັນສຸກ ລະຫວ່າງ 9 ໂມງເຊົ້າ - 5 ໂມງແລງ

    Hilltop - 902 South L Street, Tacoma, WA

    Salishan - 1724 East 44th Street, Tacoma, WA

ທ່ານຕ້ອງສະໝັກໃນລະຫວ່າງ **8 ໂມງເຊົ້າ ວັນຈັນ 7 ຕຸລາ ຫາ 5 ໂມງແລງ ວັນສຸກ 18 ຕຸລາ 2019**.
ເວລາໃດໆກໍຕາມທີ່ທ່ານສະໝັກພາຍໃນເວລາເຫຼົ່ານີ້ແມ່ນບໍ່ກະທົບຕໍ່ກັບໂອກາດຂອງທ່ານ.

## ຂ້ອຍສາມາດສະໝັກຫຼາຍກວ່າໜຶ່ງຄັ້ງໃນລະຫວ່າງໄລຍະເວລາສະໝັກນີ້ໄດ້ບໍ?

ບໍ່ໄດ້. ເມື່ອທ່ານສະໝັກ, ພວກເຮົາຂໍໃຫ້ທ່ານຂຽນຊື່ແຕ່ລະຄົນໃນເຮືອນຂອງທ່ານ. ໃຜກໍຕາມທີ່ຢູ່ໃນລາຍຊື່ນັ້ນແມ່ນບໍ່ສາມາດສະໝັກເຂົ້າໃນລາຍຊື່ລໍຖ້ານີ້ໄດ້ອີກ. ຖ້າທ່ານບໍ່ໄດ້ຢູ່ໃນລາຍຊື່ລໍຖ້າຂອງພວກເຮົາໃນຄັ້ງນີ້, ທ່ານສາມາດລອງໃໝ່ອີກໃນຄັ້ງຕໍ່ໄປທີ່ພວກເຮົາເປີດຮັບສະໝັກ.

## ຂ້ອຍຈະຮູ້ໄດ້ແນວໃດວ່າທ່ານໄດ້ຮັບຄຳຮ້ອງສະໝັກຂອງຂ້ອຍຫຼືບໍ່?

ຖ້າທ່ານສະໝັກທາງອອນລາຍ, ທ່ານຈະໄດ້ຮັບໝາຍເລກຢືນຢັນ. ນອກນັ້ນທ່ານຍັງຈະໄດ້ຮັບອີເມວພ້ອມຄຳຮ້ອງສະໝັກທີ່ຕື່ມຂໍ້ມູນແລ້ວຂອງທ່ານນຳອີກ.

## ຂ້ອຍຈະໄດ້ຮັບການຕອບຄືນເມື່ອໃດ?

ພວກເຮົາຄາດວ່າຈະໄດ້ຮັບຄຳຮ້ອງສະໝັກຫຼາຍພັນອັນ. ການສຸ່ມໂຊກຈະເລືອກເອົາປະມານ 1,200 ຄົວເຮືອນສຳລັບລາຍຊື່ລໍຖ້າຂອງພວກເຮົາ. ນັ້ນແມ່ນຈຳນວນໂດຍປະມານທີ່ພວກເຮົາສາມາດໃຫ້ບໍລິການໃນສອງປີ. ພວກເຮົາຈະເອົາເຂົາເຈົ້າໃສ່ໃນລາຍຊື່ລໍຖ້າຕາມລຳດັບແບບສຸ່ມເລືອກ. ໂດຍເລີ່ມແຕ່ວັນທີ 4 ພະຈິກ, ພວກເຮົາຈະຕິດຕໍ່ຫາຜູ້ສະໝັກ ແລະ ບອກເຂົາເຈົ້າວ່າພວກເຮົາໄດ້ຮັບເລືອກເຂົ້າໃນລາຍຊື່ລໍຖ້າຫຼືບໍ່.

## ຖ້າຂ້ອຍໄດ້ເຂົ້າຢູ່ໃນລາຍຊື່ລໍຖ້າແລ້ວ, ຈະເກີດຫຍັງຂຶ້ນຕໍ່ໄປ?

ຖ້າການສຸ່ມໂຊກຂອງພວກເຮົາໄດ້ທ່ານເຂົ້າຢູ່ໃນລາຍຊື່ລໍຖ້າຂອງພວກເຮົາແລ້ວ, ທ່ານຈະໄດ້ຮັບໝາຍເລກທີ່ກຳນົດໃຫ້. ເມື່ອຊື່ຂອງທ່ານມາຢູ່ໃນອັນດັບຕົ້ນຂອງລາຍຊື່, ພວກເຮົາຈະກວດເບິ່ງເພື່ອໃຫ້ແນ່ໃຈວ່າທ່ານມີສິດ. ໜຶ່ງຂໍ້ກຳນົດຈາກສິ່ງອື່ນໆມີຢູ່ແມ່ນລາຍຮັບປະຈຳປີຂອງຄົວເຮືອນຂອງທ່ານຕ້ອງຕ່ຳກວ່າຈຳນວນເຫຼົ່ານີ້:

| ຈຳນວນຄົນໃນຄົວເຮືອນຂອງທ່ານ | | | | | | | |
|---|---|---|---|---|---|---|---|
| **1** | **2** | **3** | **4** | **5** | **6** | **7** | **8** |
| ບໍ່ມີສິດ | ບໍ່ມີສິດ | $40,320 | $44,760 | $48,360 | $51,960 | $55,560 | $59,100 |

ຖ້າທ່ານມີສິດ, ພວກເຮົາຈະສະເໜີທາງເລືອກທີ່ຢູ່ອາໄສທີ່ມີໃຫ້ທຳອິດຂອງພວກເຮົາໃຫ້ທ່ານ. ອັນນີ້ອາດຈະແມ່ນ:

1. ເຮືອນທີ່ຢູ່ໃນບັນດາທີ່ຢູ່ອາໄສບ່ອນໃດໜຶ່ງຂອງພວກເຮົາ. ຖ້າເປັນແນວນັ້ນ, ທ່ານຕ້ອງຍອມຮັບສະຖານທີ່ທີ່ພວກເຮົາສະເໜີໃຫ້ ເວັ້ນເສຍແຕ່ວ່າມີເຫດຜົນທີ່ດີໃນການບໍ່ຍອມຮັບ.
2. ຂໍ້ສະເໜີຊ່ວຍຈ່າຍຄ່າເຊົ່າຂອງທ່ານໃນ Tacoma. ທ່ານເລືອກບ່ອນທີ່ຈະອາໄສຢູ່.

## ພວກເຮົາຈະເປີດຮັບຄຳຮ້ອງສະໝັກອີກເມື່ອໃດ?

ເປັນໄປໄດ້ວ່າພວກເຮົາຈະເປີດຮັບຄຳຮ້ອງສະໝັກໃນອີກປະມານສອງປີ. ພວກເຮົາຈະລໍຖ້າຈົນກວ່າວ່າລາຍຊື່ລໍຖ້າສັ້ນລົງກ່ອນທີ່ຈະເພີ່ມຄົນເຂົ້າຕື່ມອີກ. ເຂົ້າເບິ່ງ tacomahousing.org/notifyme ແລະ ລົງທະບຽນຮັບອີເມວແຈ້ງບອກເມື່ອໃດລາຍຊື່ລໍຖ້າຈະເປີດອີກ.

## ຮຽນຮູ້ເພີ່ມເຕີມ: **Tacomahousing.net/WaitlistFAQ**